ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມຄຸ້ມຄອງວິສາຫະກິດການເງິນ

ເລກທີ 0530 /ຄວກ

ນະຄອນຫຼວງວຽງຈັນ, ວັນທີ 18 ພຶດສະພາ 2026

# ໜັງສືແຈ້ງເຊີນປະມູນ

1. ກົມຄຸ້ມຄອງວິສາຫະກິດການເງິນ ກະຊວງການເງິນ ໃນນາມຕາງໜ້າຄະນະຮັບຜິດຊອບຈັດຊື້ລະບົບ ແລະ ອຸປະກອນຕ່າງໆ ສໍາລັບເກັບເງິນຄ່າຜ່ານທາງຫຼວງແຫ່ງຊາດເລກທີ 9 ຂໍເຊີນບັນດາບໍລິສັດທີ່ມີຄຸນວຸດທິ ເໝາະສົມສົນໃຈເຂົ້າຍື່ນຊອງປະມູນສໍາລັບການສະໜອງລະບົບ ແລະ ອຸປະກອນຕ່າງໆ ສໍາລັບເກັບເງິນ ຄ່າຜ່ານທາງຫຼວງແຫ່ງຊາດເລກທີ 9 ຕາມໜ້າວຽກ, TOR, ສະເປັກເຕັກນິກ, ຈໍານວນ ແລະ ເງື່ອນໄຂ ຕ່າງໆ ທີ່ໄດ້ກໍານົດໄວ້ໃນເອກະສານປະມູນ. ກໍານົດເວລາມອບຮັບພາຍໃນ 60 ວັນ;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກໍານົດໄວ້ຢູ່ກົດໝາຍວ່າດ້ວຍການ ຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາ ແນະນໍາກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນ ການປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ (1) ກົມຄຸ້ມຄອງວິສາຫະກິດການເງິນ ຕຶກ C ຊັ້ນ 01 ກະຊວງການເງິນ (ຕຶກແຄມຂອງ) ໂທລະສັບ 020 59529898, 020 22201124 ແລະ (2) ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 4 (ຕຶກແຄມຂອງ) ເບີ ໂທຕິດຕໍ່ 020 55424565 ໃນເວລາລັດຖະການ;
4. ເອກະສານປະມູນເລີ່ມຂາຍແຕ່ວັນທີ 18 ພຶດສະພາ 2026 ຫາ 23 ມິຖຸນາ 2026. ໃນລາຄາ 10,000,000 ກີບ/ຊອງ. ວິທີການຊໍາລະເປັນເງິນສົດ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນໍາໃຊ້ເຂົ້າໃນວຽກງານປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 8:30 ໂມງ ຂອງວັນທີ 23 ມິຖຸນາ 2026. ຊອງປະມູນທຸກໆຊອງຈະໄດ້ເປີດໃນວັນທີ 23 ມິຖຸນາ 2026 ເວລາ 09:00 ໂມງ ທີ່ຫ້ອງປະຊຸມ ກະຊວງການເງິນ ຊັ້ນ 01 (ຕຶກແຄມຂອງ) ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບ ແລະ ສົ່ງຄືນໂດຍບໍ່ມີການເປີດ;
6. ທຸກຊອງປະມູນຕ້ອງມີການຄໍ້າປະກັນດ້ວຍ ແຊັກ (ວີຊາ) ຫຼື ໜັງສືຄໍ້າປະກັນອອກໂດຍທະນາຄານ, ຊຶ່ງມີມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄອນດ້ວຍ.

ຮອງຫົວໜ້າກົມ,

ຫົວໜ້າກອງເລຂາຄະນະ 4752/ກງ

ສົມໄຊ ແກ້ວວັນດີ